**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ປະທານປະເທດ** **ເລກທີ 201 /ປປທ**

**ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2020**

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການໃຫ້ອະໄພຍະໂທດປ່ອຍຕົວນັກໂທດ ຊ່ວງໄລຍະປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ການແຜ່ລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດ VI ມາດຕາ 67, ຂໍ້ 12 ກ່ຽວກັບການຕົກລົງໃຫ້ອະໄພຍະໂທດ;
- ອີງຕາມ ໜັງສືສະເໜີຂອງນາຍົກລັດຖະມົນຕີ, ສະບັບເລກທີ 91/ນຍ, ລົງວັນທີ 18 ສິງຫາ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ຕົກລົງອະໄພຍະໂທດປ່ອຍຕົວ ໃຫ້ແກ່ນັກໂທດ ຈຳນວນ 970 ຄົນ, ຍິງ 135 ຄົນ; ຕ່າງປະເທດ 17 ຄົນ, ຍິງ 01 ຄົນ, ລາຍລະອຽດມີໃນບັນຊີ ລຸ່ມນີ້:

1. ບັນຊີ ເລກທີ 1923/ກຄສ ຫາ ເລກທີ 1940/ກຄສ, ລົງວັນທີ 17 ກໍລະກົດ 2020; ຊຶ່ງມີນັກໂທດໄດ້ຮັບອະໄພຍະໂທດປ່ອຍຕົວ ທັງໝົດ ຈຳນວນ 370 ຄົນ, ຍິງ 51 ຄົນ; ຕ່າງປະເທດ 02 ຄົນ, ຍິງ 01 ຄົນ.
2. ບັນຊີ ເລກທີ 1907/ກຄສ ຫາ ເລກທີ 1922/ກຄສ, ລົງວັນທີ 17 ກໍລະກົດ 2020; ຊຶ່ງມີນັກໂທດໄດ້ຮັບອະໄພຍະໂທດປ່ອຍຕົວ ທັງໝົດ ຈຳນວນ 531 ຄົນ, ຍິງ 74 ຄົນ; ຕ່າງປະເທດ 14 ຄົນ.
3. ບັນຊີ ເລກທີ 1941/ກຄສ ຫາ ເລກທີ 1955/ກຄສ, ລົງວັນທີ 17 ກໍລະກົດ 2020; ຊຶ່ງມີນັກໂທດໄດ້ຮັບອະໄພຍະໂທດປ່ອຍຕົວ ທັງໝົດ ຈຳນວນ 69 ຄົນ, ຍິງ 10 ຄົນ; ຕ່າງປະເທດ 01 ຄົນ.

**ມາດຕາ 2** ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດລັດຖະດຳລັດ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ